ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 536 /ລບ

ນະຄອນຫຼວງວຽງຈັນ, ວັນທີ 18 / 08 / 25

# ດຳລັດ
# ວ່າດ້ວຍສະມາຄົມ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 309/ຄຈສພ, ລົງວັນທີ 16 ກໍລະກົດ 2025.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ເຄື່ອນໄຫວ, ຄຸ້ມຄອງ, ຕິດຕາມ ກວດກາ ແລະ ຊຸກຍູ້ສະມາຄົມ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ດຳເນີນຢ່າງຖືກຕ້ອງ, ເປັນລະບົບ, ເຂັ້ມແຂງ ແລະ ທັນສະໄໝ ແນໃສ່ສົ່ງເສີມຄວາມສາມັກຄີເປັນປຶກແຜ່ນຂອງຊາດ, ລຶບລ້າງຄວາມທຸກຍາກຂອງປະຊາຊົນ, ຊ່ວຍເຫຼືອສັງຄົມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ສະມາຄົມ

ສະມາຄົມ ແມ່ນ ການຈັດຕັ້ງສັງຄົມ ມີຖານະນິຕິບຸກຄົນ, ມີສະມາຊິກຮ່ວມກັນສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ, ເຄື່ອນໄຫວເປັນປະຈຳ, ບໍ່ຫວັງຜົນກຳໄລ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຄົມ, ສະມາຊິກສະມາຄົມ ຫຼື ຊຸມຊົນ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບໍ່ຫວັງຜົນກຳໄລ** ໝາຍເຖິງ ທຶນ, ຊັບສິນ, ລາຍຮັບ ທີ່ໄດ້ມາຈາກການເຄື່ອນໄຫວຂອງສະມາຄົມພາຍຫຼັງຫັກຄ່າໃຊ້ຈ່າຍບໍລິຫານອອກແລ້ວ ສ່ວນທີ່ເຫຼືອບໍ່ໄດ້ນຳມາແບ່ງປັນກັນ, ບໍ່ສວຍໃຊ້ເພື່ອຜົນປະໂຫຍດສ່ວນຕົວ ແຕ່ນຳໃຊ້ຕາມຈຸດປະສົງທີ່ໄດ້ກຳນົດໃນກົດລະບຽບຂອງສະມາຄົມ;

2. **ຊຸມຊົນ** ໝາຍເຖິງ ພົນລະເມືອງ ທີ່ດຳລົງຊີວິດຢູ່ໃນພື້ນທີ່ໃດໜຶ່ງທີ່ແນ່ນອນ ມີຈຸດພິເສດຄ້າຍຄືກັນ, ຜູກພັນກັນ, ເພິ່ງພາອາໃສເຊິ່ງກັນ ແລະ ກັນ;

3. **ຊັບສິນຂອງສະມາຄົມ** ໝາຍເຖິງ ທີ່ດິນ, ຕຶກ, ອາຄານ, ພາຫະນະ, ອຸປະກອນຮັບໃຊ້ຫ້ອງການ ແລະ ຊັບສິນອື່ນ ຊຶ່ງໄດ້ມາຈາກ ການຊື້, ການປະກອບສ່ວນ, ການບໍລິຈາກ, ການຊ່ວຍເຫຼືອລ້າ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຫຼື ລັດມອບໃຫ້;

4. **ຕົນຕົວສະໝັກໃຈ** ໝາຍເຖິງ ການເຂົ້າຮ່ວມການຈັດຕັ້ງສັງຄົມໃດໜຶ່ງ ຕາມເຈດຈຳນົງ, ຄວາມມຸ່ງມາດປາດຖະໜາຂອງແຕ່ລະຄົນ ແລະ ປາສະຈາກການບັງຄັບໃດໆ;

5. **ທຶນ** ໝາຍເຖິງ ເງິນ ແລະ ຊັບສິນ;

6. **ການບໍລິຈາກທຶນ** ໝາຍເຖິງ ການເສຍສະຫຼະ, ການມອບໂອນທຶນຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໃຫ້ແກ່ສະມາຄົມ;

7. **ການລະດົມທຶນ** ໝາຍເຖິງ ການຈັດເວທີ, ກອງປະຊຸມ, ການຈັດງານ ຫຼື ການເຄື່ອນໄຫວກິດຈະກຳອື່ນ ເພື່ອໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ບໍລິຈາກ, ສະໜັບສະໜູນທຶນ ໃຫ້ແກ່ສະມາຄົມ;

8. **ອົງການຈັດຕັ້ງສາກົນ** ໝາຍເຖິງ ອົງການຈັດຕັ້ງສາກົນທີ່ເປັນເຄືອຂ່າຍຂອງອົງການສະຫະປະຊາຊາດ, ອົງການຈັດຕັ້ງສາກົນລະຫວ່າງລັດຖະບານ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (INGOs);

9. **ໃບທະບຽນສະມາຄົມ** ໝາຍເຖິງ ເອກະສານຢັ້ງຢືນ, ຮັບຮອງຖານະນິຕິບຸກຄົນ ແລະ ການເຄື່ອນໄຫວຂອງສະມາຄົມ ທີ່ຄະນະຈັດຕັ້ງສູນກາງພັກ ອອກໃຫ້.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານສະມາຄົມ**

ລັດ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສ້າງຕັ້ງສະມາຄົມ ແລະ ເຄື່ອນໄຫວ ຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ.

ລັດ ສົ່ງເສີມ ໃຫ້ສະມາຄົມ ພົວພັນ ຮ່ວມມື ກັບ ອົງການຈັດຕັ້ງສາກົນ ໃນການຂົນຂວາຍ ແລະ ຮັບເອົາການບໍລິຈາກທຶນ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ກົດລະບຽບຂອງສະມາຄົມ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານສະມາຄົມ**

ການເຄື່ອນໄຫວວຽກງານສະມາຄົມ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດຂອງຂະແໜງການ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;
2. ຄຸ້ມຄອງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຖືກຕ້ອງຕາມ ຈຸດປະສົງ, ເປົ້າໝາຍ ແລະ ຂອບເຂດ ທີ່ໄດ້ຮັບການອະນຸຍາດ;
4. ຮັບປະກັນຄວາມ ສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ຍຸຕິທຳ, ເປີດເຜີຍ ແລະ ສາມາດກວດສອບໄດ້;
5. ຕົນຕົວສະໝັກໃຈປະກອບທຶນ ເພື່ອສ້າງຕັ້ງສະມາຄົມ;
6. ເຄື່ອນໄຫວກຸ້ມຕົນເອງທາງດ້ານການເງິນ ແລະ ບໍ່ຫວັງຜົນກຳໄລ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນ ກັບວຽກງານ ສະມາຄົມ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດ ແລະ ຂອບເຂດການເຄື່ອນໄຫວຂອງສະມາຄົມ

**ມາດຕາ 7 ປະເພດສະມາຄົມ**

ປະເພດສະມາຄົມ ຢູ່ ສປປ ລາວ ມີດັ່ງນີ້:

1. ສະມາຄົມດ້ານເສດຖະກິດ;
2. ສະມາຄົມດ້ານວິຊາຊີບ, ເຕັກນິກວິຊາການ ແລະ ການປະດິດຄິດແຕ່ງ;
3. ສະມາຄົມດ້ານສັງຄົມສົງເຄາະ ແລະ ພັດທະນາສັງຄົມ.

**ມາດຕາ 8 ສະມາຄົມດ້ານເສດຖະກິດ**

ສະມາຄົມດ້ານເສດຖະກິດ ແມ່ນ ການຈັດຕັ້ງ ທີ່ເຄື່ອນໄຫວສົ່ງເສີມການດຳເນີນທຸລະກິດ ຊຶ່ງປະກອບມີຫົວໜ່ວຍທຸລະກິດ ທີ່ໄດ້ຮັບການຂຶ້ນທະບຽນວິສາຫະກິດ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດ ການຜະລິດ, ການຄ້າ ແລະ ການບໍລິການ ຢ່າງຖືກຕ້ອງຕາມກົດໝາຍ ແລະ ບຸກຄົນ ທີ່ຕື່ນຕົວສະໝັກໃຈ ເປັນສະມາຊິກ.

**ມາດຕາ 9 ສະມາຄົມດ້ານວິຊາຊີບ, ເຕັກນິກວິຊາການ ແລະ ການປະດິດຄິດແຕ່ງ**

ສະມາຄົມດ້ານວິຊາຊີບ, ເຕັກນິກວິຊາການ ແລະ ການປະດິດຄິດແຕ່ງ ແມ່ນ ການຈັດຕັ້ງ ທີ່ເຄື່ອນໄຫວສົ່ງເສີມການປະກອບອາຊີບ, ເຕັກນິກວິຊາການ ແລະ ການປະດິດຄິດແຕ່ງ ຊຶ່ງມີຜູ້ມີວິຊາຊີບ, ມີຄວາມຮູ້, ຄວາມສາມາດດ້ານເຕັກນິກວິຊາການ ແລະ ຜູ້ມີພອນສະຫວັນ ໃດໜຶ່ງທີ່ແນ່ນອນ ທີ່ຕື່ນຕົວສະໝັກໃຈ ເປັນສະມາຊິກ.

**ມາດຕາ 10 ສະມາຄົມດ້ານສັງຄົມສົງເຄາະ ແລະ ພັດທະນາສັງຄົມ**

ສະມາຄົມດ້ານສັງຄົມສົງເຄາະ ແລະ ພັດທະນາສັງຄົມ ແມ່ນ ການຈັດຕັ້ງທີ່ເຄື່ອນໄຫວໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳ, ຜູ້ຖືກເຄາະຮ້າຍ, ໄພພິບັດ, ກູ້ໄພ, ການພັດທະນາ, ຊ່ວຍເຫຼືອສັງຄົມ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ອື່ນໆ ຊຶ່ງມີຜູ້ມີນໍ້າໃຈມະນຸດສະທຳ ແລະ ເສຍສະຫຼະ ປະກອບສ່ວນທຶນ, ວັດຖຸ, ສະຕິປັນຍາ, ເຫື່ອແຮງ ໂດຍບໍ່ຫວັງຜົນຕອບແທນ ທີ່ຕື່ນຕົວສະໝັກໃຈ ເປັນສະມາຊິກ.

**ມາດຕາ 11 ຂອບເຂດການເຄື່ອນໄຫວຂອງສະມາຄົມ**

ສະມາຄົມ ມີຂອບເຂດການເຄື່ອນໄຫວ ດັ່ງນີ້:

1. ສະມາຄົມເຄື່ອນໄຫວໃນຂອບເຂດ ທົ່ວປະເທດ;
2. ສະມາຄົມເຄື່ອນໄຫວໃນຂອບເຂດ ນະຄອນຫຼວງ, ແຂວງ;
3. ສະມາຄົມເຄື່ອນໄຫວໃນຂອບເຂດ ເມືອງ, ນະຄອນ.

**ມາດຕາ 12 ສະມາຄົມທີ່ເຄື່ອນໄຫວໃນຂອບເຂດ ທົ່ວປະເທດ**

ສະມາຄົມທີ່ເຄື່ອນໄຫວໃນຂອບເຂດ ທົ່ວປະເທດ ແມ່ນ ສະມາຄົມທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວໃນຂອບເຂດ ທົ່ວປະເທດ, ພາກໃດໜຶ່ງ ຫຼື ກວມເອົາສອງແຂວງຂຶ້ນໄປ.

**ມາດຕາ 13 ສະມາຄົມທີ່ເຄື່ອນໄຫວໃນຂອບເຂດ ນະຄອນຫຼວງ, ແຂວງ**

ສະມາຄົມທີ່ເຄື່ອນໄຫວໃນຂອບເຂດ ນະຄອນຫຼວງ, ແຂວງ ແມ່ນ ສະມາຄົມ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວພາຍໃນ ນະຄອນຫຼວງ, ແຂວງ.

**ມາດຕາ 14 ສະມາຄົມທີ່ເຄື່ອນໄຫວໃນຂອບເຂດ ເມືອງ, ນະຄອນ**

ສະມາຄົມທີ່ເຄື່ອນໄຫວໃນຂອບເຂດ ເມືອງ, ນະຄອນ ແມ່ນ ສະມາຄົມ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວພາຍໃນ ເມືອງ, ນະຄອນ.

## ໝວດທີ 3
## ການສ້າງຕັ້ງສະມາຄົມ

**ມາດຕາ 15 ເງື່ອນໄຂການສ້າງຕັ້ງສະມາຄົມ**

ການສ້າງຕັ້ງສະມາຄົມ ມີເງື່ອນໄຂ ດັ່ງນີ້:

1. ມີ ຊື່ ແລະ ຈຸດປະສົງ ຂອງສະມາຄົມ;
2. ມີຂອບເຂດ, ຂະແໜງການ ການເຄື່ອນໄຫວ ຢ່າງຈະແຈ້ງ;
3. ມີຄະນະຂັບຂວາຍສ້າງຕັ້ງສະມາຄົມ ຢ່າງໜ້ອຍຫ້າຄົນຂຶ້ນໄປ ໂດຍແມ່ນຜູ້ລິເລີ່ມສ້າງຕັ້ງສະມາຄົມ ເປັນຜູ້ບົ່ງຕົວ ຊຶ່ງຢ່າງໜ້ອຍໜຶ່ງໃນຫ້າຂອງຄະນະຂັບຂວາຍ ຕ້ອງມີໃບຢັ້ງຢືນວິຊາສະເພາະ ຫຼື ໃບຢັ້ງຢືນປະສົບການ ເຮັດວຽກ ທີ່ກ່ຽວຂ້ອງກັບຈຸດປະສົງເຄື່ອນໄຫວຂອງສະມາຄົມ;
4. ຄະນະຂັບຂວາຍສ້າງຕັ້ງ, ຄະນະບໍລິຫານ, ຄະນະກວດກາ ແລະ ຜູ້ອໍານວຍການ ຕ້ອງແມ່ນພົນລະເມືອງ ລາວ ມີອາຍຸແຕ່ ສິບແປດ ປີຂຶ້ນໄປ, ມີປະຫວັດຈະແຈ້ງ, ສຸຂະພາບແຂງແຮງ, ສາມາດເຕົ້າໂຮມຄວາມສາມັກຄີ, ເຮັດວຽກເປັນໝູ່ຄະນະ, ມີຄວາມໂປ່ງໃສ, ມີຄວາມເສຍສະຫຼະເພື່ອຜົນປະໂຫຍດສ່ວນລວມ, ມີຄວາມເຄົາລົບຊຶ່ງກັນ ແລະ ກັນ, ບໍລິສຸດສັດຊື່, ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທໍາຜິດໂດຍເຈດຕະນາ;
5. ມີສໍານັກງານທີ່ຕັ້ງຢູ່ ສປປ ລາວ ໂດຍມີການຢັ້ງຢືນຈາກຄະນະກໍາມະການປົກຄອງບ້ານ ບ່ອນທີ່ສໍານັກງານສະມາຄົມຕັ້ງຢູ່, ມີໜັງສືຢັ້ງຢືນກໍາມະສິດ ຫຼື ສັນຍາເຊົ່າທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
6. ມີກົດລະບຽບພາຍໃນສະມາຄົມ;
7. ມີຜູ້ສະໝັກໃຈທີ່ເປັນສະມາຊິກສາມັນ ລົງທະບຽນເຂົ້າຮ່ວມຢ່າງໜ້ອຍ ຊາວຫ້າ ຄົນ ສໍາລັບສະມາຄົມທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ; ສິບຫ້າ ຄົນ ສໍາລັບສະມາຄົມ ທີ່ເຄື່ອນໄຫວໃນຂອບເຂດ ນະຄອນຫຼວງ, ແຂວງ; ສິບ ຄົນ ສໍາລັບສະມາຄົມທີ່ເຄື່ອນໄຫວໃນຂອບເຂດ ເມືອງ, ນະຄອນ.

**ມາດຕາ 16 ການກຳນົດ ຊື່ ແລະ ຈຸດປະສົງ ຂອງສະມາຄົມ**

ຊື່ສະມາຄົມ ຕ້ອງບໍ່ໃສ່ຄຳວ່າ ແຫ່ງຊາດ ຫຼື ແຫ່ງ ສປປ ລາວ, ບໍ່ຊ້ຳຊ້ອນກັບຊື່ສະມາຄົມ ທີ່ໄດ້ຮັບອະນຸຍາດສ້າງຕັ້ງຂຶ້ນກ່ອນ, ກຳນົດເປັນພາສາລາວ, ຈະແຈ້ງ, ເຂົ້າໃຈງ່າຍ, ບໍ່ມີລັກສະນະຫຍາບຄາຍ, ຖ້າແປເປັນພາສາຕ່າງປະເທດ ຕ້ອງໃຫ້ມີຄວາມໝາຍສອດຄ່ອງກັບຊື່ ທີ່ເປັນພາສາລາວ.

ຈຸດປະສົງຂອງສະມາຄົມ ຕ້ອງຈະແຈ້ງ ໂດຍບໍ່ຂັດກັບກົດໝາຍ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ, ທ້ອງຖິ່ນ ແລະ ບັນດາເຜົ່າ, ບໍ່ເປັນໄພອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິດເສລີພາບຂອງບຸກຄົນອື່ນ.

**ມາດຕາ 17 ຂັ້ນຕອນການສ້າງຕັ້ງສະມາຄົມ**

ການສ້າງຕັ້ງສະມາຄົມ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຮັບຮອງຄະນະຂົນຂວາຍສ້າງຕັ້ງສະມາຄົມ;
2. ການເປີດກອງປະຊຸມສ້າງຕັ້ງສະມາຄົມ;
3. ການອະນຸຍາດສ້າງຕັ້ງ ແລະ ຈົດທະບຽນສະມາຄົມ.

**ມາດຕາ 18 ການຮັບຮອງຄະນະຂົນຂວາຍສ້າງຕັ້ງສະມາຄົມ**

ຜູ້ລິເລີ່ມສ້າງຕັ້ງສະມາຄົມ ຕ້ອງບົ່ງຕົວແຕ່ງຕັ້ງຄະນະຂົນຂວາຍສ້າງຕັ້ງສະມາຄົມ ຢ່າງໜ້ອຍ ຫ້າ ຄົນ, ຈາກນັ້ນປະກອບເອກະສານ ເພື່ອສະເໜີຕໍ່ຄະນະຈັດຕັ້ງສູນກາງພັກ ພິຈາລະນາຮັບຮອງ.

ການຮັບຮອງຄະນະຂົນຂວາຍສ້າງຕັ້ງສະມາຄົມ ຕ້ອງປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີ ຂໍຮັບຮອງເອົາຄະນະຂົນຂວາຍ ຕາມແບບພິມຂອງຄະນະຈັດຕັ້ງສູນກາງພັກ;
2. ຊີວະປະຫວັດຂອງຄະນະຂົນຂວາຍ ຕາມແບບພິມຂອງຄະນະຈັດຕັ້ງສູນກາງພັກ;
3. ສຳເນົາບັດປະຈຳຕົວ ແລະ ສຳເນົາປຶ້ມສຳມະໂນຄົວ ຂອງແຕ່ລະຄົນ, ໜັງສືຜ່ານແດນສຳລັບນັກທຸລະກິດຕ່າງປະເທດ;
4. ໃບຢັ້ງຢືນທີ່ຢູ່;
5. ໃບແຈ້ງໂທດ;
6. ໃບຢັ້ງຢືນວິຊາສະເພາະ ຫຼື ໃບຢັ້ງຢືນປະສົບການເຮັດວຽກ ໃນດ້ານໃດໜຶ່ງທີ່ກ່ຽວຂ້ອງກັບຈຸດປະສົງ ແລະ ຂະແໜງການເຄື່ອນໄຫວຂອງສະມາຄົມ;
7. ສຳເນົາໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດດຳເນີນທຸລະກິດ ຂອງຄະນະຂົນຂວາຍສ້າງຕັ້ງສະມາຄົມ ສຳລັບສະມາຄົມດ້ານເສດຖະກິດ;
8. ບົດສະເໜີເຫດຜົນ ແລະ ຄວາມຈຳເປັນໃນການສ້າງຕັ້ງສະມາຄົມ.

ພາຍຫຼັງໄດ້ຮັບໜັງສືສະເໜີ ຂໍຮັບຮອງຄະນະຂົນຂວາຍ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ຄະນະຈັດຕັ້ງສູນກາງພັກ ຕ້ອງສະເໜີຂໍຄຳເຫັນຢັ້ງຢືນ ຈາກກະຊວງປ້ອງກັນຄວາມສະຫງົບ, ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ພາຍໃນ ສິບວັນ.

ກະຊວງປ້ອງກັນຄວາມສະຫງົບ, ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ຕ້ອງແຈ້ງຕອບມາຍັງ ຄະນະຈັດຕັ້ງສູນກາງພັກ ພາຍໃນກຳນົດ ສີ່ສິບຫ້າ ວັນ ນັບແຕ່ວັນໄດ້ຮັບໜັງສືສະເໜີເປັນຕົ້ນໄປ.

ຄະນະຈັດຕັ້ງສູນກາງພັກ ພິຈາລະນາອະນຸຍາດການຮັບຮອງຄະນະຂົນຂວາຍສ້າງຕັ້ງສະມາຄົມ ພາຍໃນກຳນົດ ສິບ ວັນ ນັບແຕ່ວັນໄດ້ຮັບຄຳເຫັນຈາກກະຊວງປ້ອງກັນຄວາມສະຫງົບ, ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ເປັນຕົ້ນໄປ.

ໃນກໍລະນີ ປະຕິເສດການຮັບຮອງຄະນະຂົນຂວາຍສ້າງຕັ້ງສະມາຄົມ ຕ້ອງແຈ້ງເປັນລາຍລັກອັກສອນພ້ອມດ້ວຍເຫດຜົນ ໃຫ້ຜູ້ສະເໜີ ພາຍໃນເວລາ ຫ້າ ວັນລັດຖະການ.

ສຳລັບ ສິດ ແລະ ໜ້າທີ່ ຂອງຄະນະຂົນຂວາຍສ້າງຕັ້ງສະມາຄົມ ໄດ້ກຳນົດໄວ້ໃນລະບຽບຕ່າງຫາກ.

## ມາດຕາ 19 ການເປີດກອງປະຊຸມສ້າງຕັ້ງສະມາຄົມ

ຄະນະຂົນຂວາຍສ້າງຕັ້ງສະມາຄົມ ທີ່ໄດ້ຖືກຮັບຮອງຕ້ອງສະເໜີຕໍ່ ຄະນະຈັດຕັ້ງສູນກາງພັກ ເພື່ອພິຈາລະນາອະນຸຍາດເປີດກອງປະຊຸມສ້າງຕັ້ງສະມາຄົມ.

ກອງປະຊຸມສ້າງຕັ້ງສະມາຄົມ ພິຈາລະນາບັນຫາສຳຄັນ ດັ່ງນີ້:

1. ເລືອກຕັ້ງຄະນະບໍລິຫານ, ຄະນະກວດກາ ແລະ ຕຳແໜ່ງອື່ນ ທີ່ຈຳເປັນຂອງສະມາຄົມ;
2. ຜ່ານຮ່າງກົດລະບຽບຂອງສະມາຄົມ;
3. ຜ່ານແຜນການເຄື່ອນໄຫວ ຫຼື ແຜນດຳເນີນງານ ຂອງສະມາຄົມ;
4. ຜ່ານມະຕິກອງປະຊຸມສ້າງຕັ້ງສະມາຄົມ ແລະ ບັນຫາອື່ນ.

ເອກະສານສະເໜີຂໍເປີດກອງປະຊຸມ ມີ ດັ່ງນີ້:

1. ໜັງສືສະເໜີ ຂໍເປີດກອງປະຊຸມສ້າງຕັ້ງສະມາຄົມ;
2. ຮ່າງກົດລະບຽບຂອງສະມາຄົມ ຕາມແບບພິມຂອງຄະນະຈັດຕັ້ງສູນກາງພັກ;
3. ບັນຊີລາຍຊື່ຜູ້ລົງສະໝັກເປັນຄະນະບໍລິຫານສະມາຄົມ;
4. ບັນຊີລາຍຊື່ຜູ້ສະໝັກເຂົ້າເປັນສະມາຊິກສາມັນ.

ພາຍຫຼັງ ຄະນະຈັດຕັ້ງສູນກາງພັກ ໄດ້ຮັບໜັງສືສະເໜີ ຂໍເປີດກອງປະຊຸມສ້າງຕັ້ງ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕ້ອງພິຈາລະນາອະນຸຍາດ ເປີດກອງປະຊຸມສ້າງຕັ້ງສະມາຄົມ ພາຍໃນກຳນົດ ສິບຫ້າ ວັນ.

ໃນກໍລະນີ ປະຕິເສດການເປີດກອງປະຊຸມສ້າງຕັ້ງສະມາຄົມ ຕ້ອງແຈ້ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ໃຫ້ຜູ້ສະເໜີ ພາຍໃນກຳນົດ ຫ້າ ວັນລັດຖະການ.

ສຳລັບລາຍລະອຽດ ກ່ຽວກັບການດຳເນີນກອງປະຊຸມສ້າງຕັ້ງສະມາຄົມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 20 ການອະນຸຍາດສ້າງຕັ້ງ ແລະ ຈົດທະບຽນສະມາຄົມ

ຄະນະບໍລິຫານ ທີ່ຖືກຮັບຮອງຈາກກອງປະຊຸມສ້າງຕັ້ງສະມາຄົມ ຕ້ອງສະເໜີຂໍສ້າງຕັ້ງສະມາຄົມນຳ ຄະນະຈັດຕັ້ງສູນກາງພັກ ພາຍໃນກຳນົດ ສາມສິບ ວັນ ນັບແຕ່ວັນສິ້ນສຸດກອງປະຊຸມສ້າງຕັ້ງສະມາຄົມ ພ້ອມທັງປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີຂໍອະນຸຍາດສ້າງຕັ້ງສະມາຄົມ ຕາມແບບພິມຂອງຄະນະຈັດຕັ້ງສູນກາງພັກ;
2. ຮ່າງກົດລະບຽບສະມາຄົມ ສະບັບທີ່ໄດ້ຮັບຮອງໃນກອງປະຊຸມສ້າງຕັ້ງສະມາຄົມ;
3. ບັນຊີລາຍຊື່ສະມາຊິກສະມາຄົມ;

4. ບົດບັນທຶກກອງປະຊຸມສ້າງຕັ້ງສະມາຄົມ;

5. ມະຕິກອງປະຊຸມສ້າງຕັ້ງສະມາຄົມ;

6. ໃບລົງທະບຽນສະມາຊິກ ຜູ້ເຂົ້າຮ່ວມກອງປະຊຸມ;

7. ແຜນການເຄື່ອນໄຫວ ຫຼື ແຜນດຳເນີນງານຂອງສະມາຄົມ;

8. ໃບຢັ້ງຢືນທີ່ຕັ້ງສຳນັກງານຂອງສະມາຄົມ ທີ່ໄດ້ຮັບການຢັ້ງຢືນຈາກຄະນະກຳມະການປົກຄອງຕາແສງ ແລະ ແຜນວາດທີ່ຕັ້ງສຳນັກງານຂອງສະມາຄົມ.

ຄະນະຈັດຕັ້ງສູນກາງພັກ ພິຈາລະນາອະນຸຍາດ ການສ້າງຕັ້ງສະມາຄົມ ພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳເຫັນຈາກ ກະຊວງປ້ອງກັນຄວາມສະຫງົບ, ກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງເປັນຕົ້ນໄປ.

ໃນກໍລະນີ ປະຕິເສດການສ້າງຕັ້ງສະມາຄົມ ຕ້ອງແຈ້ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ໃຫ້ຜູ້ສະເໜີ ພາຍໃນເວລາ ຫ້າ ວັນລັດຖະການ.

ສະມາຄົມໄດ້ຮັບການອະນຸຍາດສ້າງຕັ້ງແລ້ວ ຄະນະຈັດຕັ້ງສູນກາງພັກ ຕ້ອງຈົດທະບຽນສະມາຄົມ ພາຍໃນກຳນົດ ຫ້າ ວັນລັດຖະການ. ໃບທະບຽນສະມາຄົມ ມີອາຍຸການນຳໃຊ້ ສາມ ປີ ແລະ ສາມາດຕໍ່ໄດ້.

**ມາດຕາ 21 ຕາປະທັບ ແລະ ສັນຍາລັກ ຂອງສະມາຄົມ**

ສະມາຄົມ ທີ່ໄດ້ຮັບການອະນຸຍາດສ້າງຕັ້ງຢ່າງຖືກຕ້ອງຕາມດຳລັດສະບັບນີ້ ມີຕາປະທັບເປັນຂອງຕົນເພື່ອນຳໃຊ້ໃນການເຄື່ອນໄຫວວຽກງານຂອງສະມາຄົມ ໂດຍໄດ້ຮັບອະນຸຍາດຈາກກະຊວງປ້ອງກັນຄວາມສະຫງົບ.

ສຳລັບຮູບແບບ, ຂະໜາດ, ເນື້ອໃນ ແລະ ສີນ້ຳມຶກຕາປະທັບ ຂອງສະມາຄົມ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລະບຽບການກ່ຽວກັບຕາປະທັບ.

ສະມາຄົມ ມີກາໝາຍສັນຍາລັກສະເພາະຂອງຕົນ ໂດຍໄດ້ຮັບອະນຸຍາດຈາກ ຄະນະຈັດຕັ້ງສູນກາງພັກ.

**ມາດຕາ 22 ການຕໍ່ທະບຽນສະມາຄົມ**

ສະມາຄົມ ຕ້ອງສະເໜີຕໍ່ທະບຽນສະມາຄົມ ນຳຄະນະຈັດຕັ້ງສູນກາງພັກ ກ່ອນໃບທະບຽນສະມາຄົມຈະໝົດອາຍຸການນຳໃຊ້ ຫົກສິບ ວັນ ໂດຍປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີ ຂໍຕໍ່ທະບຽນ;

2. ບົດລາຍງານການເຄື່ອນໄຫວປະຈຳ ສາມ ປີ ຂອງສະມາຄົມ;

3. ສຳເນົາໃບທະບຽນສະມາຄົມ.

## ໝວດທີ 4
## ສິດ, ໜ້າທີ່ ແລະ ພັນທະ ຂອງສະມາຄົມ

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງສະມາຄົມ**

ສະມາຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຄື່ອນໄຫວໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ແຜນຍຸດທະສາດຂອງຂະແໜງການ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ລະບຽບການ;

2. ໂຄສະນາເຜີຍແຜ່ໃຫ້ກວ້າງຂວາງ, ທົ່ວເຖິງໃນສັງຄົມ ກ່ຽວກັບຈຸດປະສົງຂອງຕົນ;

3. ລະດົມ, ຂົນຂວາຍ, ຮັບເອົາການສະໜັບສະໜູນ, ຊ່ວຍເຫຼືອ ແລະ ການບໍລິຈາກທຶນ ຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

4. ພິຈາລະນາ ຮັບເອົາ, ການລາອອກ ຫຼື ການປົດສະມາຊິກຂອງສະມາຄົມ;

5. ຂຶ້ນບັນຊີການຮັບ ບໍລິຈາກທຶນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

6. ກວດລາຍຊື່ຜູ້ໃຫ້ທຶນຕາມບັນຊີຄວບຄຸມຂອງສາກົນ ຕາມການກຳນົດຂອງອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງ;

7. ເກັບຮັກສາຂໍ້ມູນກ່ຽວກັບການໃຫ້ທຶນ, ຜູ້ຮັບຜົນປະໂຫຍດຈາກການນຳໃຊ້ທຶນ ແລະ ເອກະສານ ທີ່ກ່ຽວຂ້ອງ;

8. ປະສານກັບ ກະຊວງ, ອົງການ, ພະແນກ, ອົງການທຽບເທົ່າພະແນກຂອງ ນະຄອນຫຼວງ, ແຂວງ, ຫ້ອງການ, ອົງການທຽບເທົ່າຫ້ອງການຂອງ ເມືອງ, ນະຄອນ ທີ່ພົວພັນກັບຂອບເຂດ ແລະ ຂະແໜງການ ເຄື່ອນໄຫວ ຂອງຕົນ;

9. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການຕົກລົງຂອງອົງການຄຸ້ມຄອງ ສະມາຄົມ, ກະຊວງການຕ່າງປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 24 ພັນທະຂອງສະມາຄົມ**

ສະມາຄົມ ມີພັນທະ ດັ່ງນີ້:

1. ຈັດກອງປະຊຸມໃຫຍ່ເມື່ອຄົບວາລະຕາມກົດລະບຽບຂອງສະມາຄົມ;

2. ລາຍງານການລະດົມທຶນ ຫຼື ຮັບເອົາການ ບໍລິຈາກ, ການຊ່ວຍເຫຼືອ ຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຕໍ່ຄະນະຈັດຕັ້ງສູນກາງພັກແລະ ພາກສ່ວນທີ່ກ່ຽວຂ້ອງ;

3. ລາຍງານ ແລະ ສະໜອງຂໍ້ມູນທີ່ຕິດພັນກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນແກ່ ການກໍ່ການຮ້າຍ ໃຫ້ຄະນະຈັດຕັ້ງສູນກາງພັກ, ສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ;

4. ນຳໃຊ້ທຶນທັງໝົດທີ່ສະມາຄົມ ລະດົມມາໄດ້ໃຫ້ຖືກຕ້ອງ ຕາມຈຸດປະສົງ, ເປົ້າໝາຍຂອງ ສະມາຄົມ ຕາມກົດໝາຍ ແລະ ລະບຽບການ;

5. ປະຕິບັດ ຕາມກົດໝາຍ ແລະ ລະບຽບການ ກ່ຽວກັບ ການບັນຊີ, ການກວດສອບ ແລະ ກົດລະບຽບ ຂອງສະມາຄົມ;

6. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານປະຈຳປີຂອງສະມາຄົມ ຕໍ່ຄະນະຈັດຕັ້ງສູນກາງພັກ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ອນວັນທີ 31 ທັນວາ ຂອງທຸກປີ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ໂຄງປະກອບການຈັດຕັ້ງຂອງສະມາຄົມ

**ມາດຕາ 25 ໂຄງປະກອບກົງຈັກຂອງສະມາຄົມ**

ໂຄງປະກອບກົງຈັກຂອງສະມາຄົມ ປະກອບ ມີ:

1. ຫ້ອງການບໍລິຫານ;
2. ໜ່ວຍງານວິຊາການຈຳນວນໜຶ່ງ.

ຫ້ອງການບໍລິຫານສະມາຄົມ ແມ່ນ ກົງຈັກບໍລິຫານທີ່ປະຈຳການຂອງສະມາຄົມ ມີພາລະບົດບາດ ຊ່ວຍຄະນະບໍລິຫານສະມາຄົມ ໃນການຄຸ້ມຄອງ-ບໍລິຫານ, ອຳນວຍຄວບຄຸມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງສະມາຄົມ.

ໜ່ວຍງານວິຊາການ ແມ່ນ ກົງຈັກທີ່ຮັບຜິດຊອບວຽກງານວິຊາສະເພາະໃດໜຶ່ງ ຕາມທີ່ກຳນົດໃນກົດລະບຽບຂອງສະມາຄົມ. ການສ້າງຕັ້ງໜ່ວຍງານວິຊາການຂອງສະມາຄົມ ໃຫ້ສອດຄ່ອງກັບຈຸດປະສົງຂອງສະມາຄົມ ຕາມທີ່ໄດ້ກຳນົດໃນກົດລະບຽບ ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການ.

ສຳລັບສະມາຄົມ ທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ ສາມາດສ້າງຕັ້ງຫ້ອງການສາຂາຂອງຕົນຢູ່ນະຄອນຫຼວງ, ແຂວງ ໄດ້ ບົນພື້ນຖານການເຫັນດີຈາກຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ແລະ ໄດ້ຮັບອະນຸຍາດຈາກຄະນະຈັດຕັ້ງສູນກາງພັກ. ສຳລັບຂັ້ນຕອນຂອງການສ້າງຕັ້ງຫ້ອງການສາຂາ ຈະມີລະບຽບການຕ່າງຫາກ.

**ມາດຕາ 26 ໂຄງປະກອບບຸກຄະລາກອນຂອງສະມາຄົມ**

ໂຄງປະກອບບຸກຄະລາກອນຂອງສະມາຄົມ ມີດັ່ງນີ້:

1. ຄະນະບໍລິຫານ;
2. ຄະນະກວດກາ;
3. ຜູ້ອຳນວຍການ;
4. ສະມາຊິກ;
5. ບຸກຄະລາກອນ ອື່ນ ຕາມທີ່ໄດ້ກຳນົດໄວ້ ໃນກົດລະບຽບຂອງສະມາຄົມ.

**ມາດຕາ 27 ຄະນະບໍລິຫານຂອງສະມາຄົມ**

ຄະນະບໍລິຫານຂອງສະມາຄົມ ຕ້ອງເປັນສະມາຊິກສາມັນ ຊຶ່ງຖືກເລືອກຕັ້ງໂດຍສະມາຊິກສາມັນ ໃນກອງປະຊຸມໃຫຍ່ ຂອງສະມາຄົມ ແລະ ປະກອບມີຢ່າງໜ້ອຍ ສາມ ຄົນຂຶ້ນໄປ, ມີພາລະບົດບາດ ຊີ້ນຳ, ນຳພາທຸກການເຄື່ອນໄຫວ ແລະ ຕົກລົງບັນຫາສຳຄັນ ຂອງສະມາຄົມ.

ຄະນະບໍລິຫານຂອງສະມາຄົມ ມີອາຍຸການສູງສຸດບໍ່ເກີນ ຫ້າ ປີ ແລະ ສາມາດລົງສະໝັກຄັດເລືອກເປັນຄະນະບໍລິຫານຊຸດໃໝ່ ໄດ້.

ສຳລັບນັກທຸລະກິດທີ່ເປັນຄົນຕ່າງປະເທດ ສາມາດເປັນຮອງປະທານ ຫຼື ກຳມະການ ໃນຄະນະບໍລິຫານຂອງສະມາຄົມດ້ານເສດຖະກິດ ແຕ່ບໍ່ສາມາດເປັນປະທານສະມາຄົມດ້ານເສດຖະກິດໄດ້ ແລະ ຕ້ອງມີຈຳນວນບໍ່ເກີນ ໜຶ່ງສ່ວນສາມ ຂອງຈຳນວນຄະນະບໍລິຫານ.

ຄະນະບໍລິຫານຂອງສະມາຄົມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ບໍລິຫານວຽກຂອງສະມາຄົມຢ່າງຮອບຄອບ, ມີຄວາມໂປ່ງໃສ ແລະ ບັນລຸຕາມຈຸດປະສົງທີ່ກຳນົດໄວ້;

2. ພິຈາລະນາ ແລະ ຮັບຮອງເອົາແຜນການເຄື່ອນໄຫວວຽກງານ, ແຜນງົບປະມານລາຍຮັບ-ລາຍຈ່າຍຂອງສະມາຄົມ;

3. ພິຈາລະນາຕົກລົງ ແຜນການເຄື່ອນໄຫວ, ແຜນງົບປະມານປະຈຳປີຂອງສະມາຄົມ ແລະ ກຳນົດກ່ຽວກັບ ລາຍຮັບ ແລະ ລາຍຈ່າຍ ຂອງສະມາຄົມ;

4. ພິຈາລະນາ ແລະ ຮັບຮອງເອົາ ລະບຽບການ ເພື່ອບັນລຸຕາມແຜນການເຄື່ອນໄຫວວຽກງານຂອງສະມາຄົມ;

5. ຄຸ້ມຄອງລວມກ່ຽວກັບ ການເງິນ ແລະ ຊັບສິນ ຂອງສະມາຄົມ;

6. ພິຈາລະນາຕົກລົງແຕ່ງຕັ້ງ ແລະ ປົດຕໍາແໜ່ງ ຄະນະກໍາມະການ, ຜູ້ອໍານວຍການ, ພະນັກງານວິຊາການ ແລະ ອາສາສະໝັກ ຂອງສະມາຄົມ ຕາມກົດໝາຍ, ລະບຽບການ ແລະ ກົດລະບຽບຂອງສະມາຄົມ;

7. ພິຈາລະນາຕົກລົງໃນການເຊື້ອເຊີນຜູ້ຊົງຄຸນວຸດທິ, ຜູ້ຊົງກຽດ ຫຼື ບຸກຄົນທີ່ໄດ້ສ້າງຄຸນປະໂຫຍດ ຢ່າງຫຼວງຫຼາຍໃຫ້ແກ່ສະມາຄົມ ມາເປັນສະມາຊິກກິດຕິມະສັກ;

8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງສະມາຄົມ ໃຫ້ອົງການຈັດຕັ້ງລັດທີ່ກ່ຽວຂ້ອງຊາບ ເປັນແຕ່ລະໄລຍະ;

9. ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 28 ຄະນະກວດກາຂອງສະມາຄົມ**

ຄະນະກວດກາຂອງສະມາຄົມ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ກໍາມະການ ຊຶ່ງຕ້ອງເປັນສະມາຊິກສາມັນ ທີ່ຖືກເລືອກຕັ້ງໃນກອງປະຊຸມໃຫຍ່ຂອງສະມາຄົມ ແລະ ປະກອບມີຢ່າງໜ້ອຍ ສາມ ຄົນຂຶ້ນໄປ, ມີອາຍຸການເທົ່າກັບກັບອາຍຸການ ຂອງຄະນະບໍລິຫານສະມາຄົມ, ມີພາລະບົດບາດຕິດຕາມກວດກາທຸກການເຄື່ອນໄຫວຂອງສະມາຄົມ ແລະ ການບໍລິຫານຂອງຄະນະບໍລິຫານ ເພື່ອຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ຄະນະກວດກາຂອງສະມາຄົມ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ກວດກາການຄຸ້ມຄອງບໍລິຫານຂອງຄະນະບໍລິຫານ, ການໃຊ້ຈ່າຍການເງິນ ແລະ ຊັບສິນ ຂອງສະມາຄົມ ເປັນປະຈໍາເດືອນ, ປະຈໍາໄຕມາດ ແລະ ປະຈໍາປີ ຢ່າງເປັນປົກກະຕິ; ພ້ອມທັງເຮັດບົດບັນທຶກຜົນການກວດກາ ຫຼື ບັນຫາ ທີ່ພົບເຫັນ ໃນການກວດກາແຕ່ລະຄັ້ງ ໂດຍເຊັນຮັບຮູ້ຈາກປະທານສະມາຄົມ ເພື່ອໃຫ້ຄະນະບໍລິຫານສະມາຄົມ ຫຼື ຜູ້ກ່ຽວຂ້ອງ ປັບປຸງ;

2. ກວດກາການຜັນຂະຫຍາຍ ແລະ ການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມໃຫຍ່, ກອງປະຊຸມຄະນະບໍລິຫານ, ກອງປະຊຸມປະຈໍາປີ; ກວດກາການປະຕິບັດນະໂຍບາຍຂອງສະມາຄົມ ຕໍ່ສະມາຊິກສະມາຄົມ ແລະ ກວດກາໃນກໍລະນີ ທີ່ມີປະກົດການລະເມີດກົດລະບຽບ ຫຼື ແບບແຜນວິທີການເຄື່ອນໄຫວຂອງສະມາຄົມ;

3. ພິຈາລະນາແກ້ໄຂຕໍ່ກັບຄໍາສະເໜີ ຫຼື ຄໍາຮ້ອງຂອງ ປະທານ, ຮອງປະທານ, ກໍາມະການ, ສະມາຊິກ, ຜູ້ອໍານວຍການ, ພະນັກງານ ຂອງສະມາຄົມ ແລະ ບຸກຄົນທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານສະມາຄົມ;

4. ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໃນກົດໝາຍ ແລະ ລະບຽບການ.

**ມາດຕາ 29 ຜູ້ອໍານວຍການຂອງສະມາຄົມ**

ຜູ້ອໍານວຍການຂອງສະມາຄົມ ແມ່ນ ຜູ້ທີ່ບໍລິຫານການເຄື່ອນໄຫວວຽກງານປະຈໍາວັນຂອງສະມາຄົມ, ມີພາລະບົດບາດຊ່ວຍຄະນະບໍລິຫານສະມາຄົມ ໃນການຄຸ້ມຄອງ-ບໍລິຫານ, ອໍານວຍຄວບຄຸມ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງສະມາຄົມ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍປະທານສະມາຄົມ ຕາມການຕົກລົງເຫັນດີຂອງຄະນະບໍລິຫານສະມາຄົມ.

ຜູ້ອໍານວຍການຂອງສະມາຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນຫົວໜ້າບໍລິຫານວຽກງານປະຈໍາວັນ ຂອງຫ້ອງການບໍລິຫານສະມາຄົມ;

2. ພົວພັນປະສານງານກັບພາກສ່ວນອື່ນ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງ ຕາມການມອບໝາຍຂອງປະທານສະມາຄົມ;

3. ຄຸ້ມຄອງຊັບສິນສະມາຄົມ ຕາມກົດລະບຽບຂອງສະມາຄົມ;

4. ສະເໜີປະທານສະມາຄົມ ແຕ່ງຕັ້ງຮອງຜູ້ອຳນວຍການ, ພະນັກງານວິຊາການ, ໜ່ວຍງານວິຊາການ ແລະ ອາສາສະໝັກ ເພື່ອບັນຈຸເຂົ້າໃນໜ່ວຍງານວິຊາການ ທີ່ຂຶ້ນກັບສະມາຄົມ;

5. ບັນທຶກ, ກະກຽມເນື້ອໃນເອກະສານ ກອງປະຊຸມໃຫຍ່, ກອງປະຊຸມປະຈຳປີ, ກອງປະຊຸມຄະນະບໍລິຫານ ແລະ ກອງປະຊຸມອື່ນ ຂອງສະມາຄົມ;

6. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານ, ການເງິນ ແລະ ຊັບສິນຂອງສະມາຄົມ ຕໍ່ຄະນະບໍລິຫານສະມາຄົມ ຊາບເປັນ ລາຍເດືອນ, ໄຕມາດ ແລະ ປະຈຳປີ;

7. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 30 ສະມາຊິກຂອງສະມາຄົມ**

ສະມາຊິກຂອງສະມາຄົມ ປະກອບມີ ສາມ ປະເພດ ດັ່ງນີ້:

1. ສະມາຊິກສາມັນ;
2. ສະມາຊິກສະໜັບສະໜູນ;
3. ສະມາຊິກກິດຕິມະສັກ.

**ມາດຕາ 31 ສະມາຊິກສາມັນຂອງສະມາຄົມ**

ສະມາຊິກສາມັນຂອງສະມາຄົມ ແມ່ນ ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ອາໃສ ຢູ່ ສປປ ລາວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຜູ້ທີ່ມີຄວາມເຫັນດີເຫັນພ້ອມ ນຳກົດລະບຽບຂອງສະມາຄົມ, ຕື່ນຕົວສະໝັກໃຈເຂົ້າຮ່ວມສະມາຄົມ ແລະ ມີມາດຕະຖານ, ເງື່ອນໄຂຄົບຖ້ວນເປັນສະມາຊິກສາມັນ ຕາມກົດລະບຽບຂອງສະມາຄົມ.

ສຳລັບສະມາຄົມດ້ານເສດຖະກິດ ສາມາດຮັບເອົາ ນັກທຸລະກິດ ທີ່ເປັນພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ອາໃສຢູ່ໃນ ສປປ ລາວ, ບຸກຄົນ ແລະ ນິຕິບຸກຄົນຂອງຕ່າງປະເທດ ທີ່ເຄື່ອນໄຫວດຳເນີນທຸລະກິດ ຢ່າງຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ ເປັນສະມາຊິກສາມັນຂອງສະມາຄົມໄດ້ ແຕ່ບໍ່ໃຫ້ເກີນໜຶ່ງສ່ວນສາມ ຂອງຈຳນວນສະມາຊິກສາມັນ ໂດຍໄດ້ຮັບການເຫັນດີ ຈາກຄະນະຈັດຕັ້ງສູນກາງພັກ.

ສະມາຊິກສາມັນຂອງສະມາຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມ ກອງປະຊຸມໃຫຍ່, ກອງປະຊຸມປະຈຳປີ ແລະ ກອງປະຊຸມອື່ນ ຂອງສະມາຄົມ;

2. ເລືອກຕັ້ງ, ສະໝັກຮັບເລືອກຕັ້ງ ເປັນຄະນະບໍລິຫານ, ຄະນະກວດກາ ແລະ ອຳນວຍການ ສະມາຄົມ ແລະ ລົງຄະແນນຕັດສິນບັນຫາສຳຄັນຂອງສະມາຄົມ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ;

3. ເຂົ້າຮ່ວມກິດຈະກຳການເຄື່ອນໄຫວຂອງສະມາຄົມຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ;

4. ຈ່າຍເງິນຄ່າທຳນຽມ ແລະ ເງິນບຳລຸງສະມາຊິກສະມາຄົມ ຕາມທີ່ໄດ້ກຳນົດໃນກົດລະບຽບຂອງສະມາຄົມ;

5. ປົກປັກຮັກສາຊັບສິນ ແລະ ນຳໃຊ້ສະຖານທີ່ຂອງສະມາຄົມ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ;

6. ຮັບສະຫວັດດີການ, ນະໂຍບາຍ ແລະ ຜົນປະໂຫຍດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ;

7. ສະເໜີຄຳຄິດເຫັນກ່ຽວກັບການເຄື່ອນໄຫວວຽກງານ, ການເງິນ ແລະ ບັນຊີຊັບສິນ ຂອງສະມາຄົມ ຕໍ່ຄະນະບໍລິຫານ ແລະ ຄະນະກວດກາ ສະມາຄົມ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 32 ສະມາຊິກສະໜັບສະໜູນຂອງສະມາຄົມ**

ສະມາຊິກສະໜັບສະໜູນຂອງສະມາຄົມ ແມ່ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຄວາມເຫັນດີເຫັນພ້ອມນຳກົດລະບຽບຂອງສະມາຄົມ, ມີຄວາມຕື່ນຕົວສະໝັກໃຈເຂົ້າຮ່ວມ, ປະກອບສ່ວນ, ສົມທົບທຶນ ຫຼື ຊັບສິນ, ສະຕິປັນຍາ ໃຫ້ແກ່ສະມາຄົມ ແຕ່ບໍ່ມີຄວາມສະໝັກໃຈເຂົ້າເປັນ ສະມາຊິກສາມັນ.

ສະມາຊິກສະໜັບສະໜູນ ມີ ສິດ ແລະ ໜ້າທີ່ ຄືກັນກັບສະມາຊິກສາມັນ ຍົກເວັ້ນສິດເລືອກຕັ້ງ, ສະໝັກ ຮັບເລືອກຕັ້ງ ເຂົ້າໃນຕຳແໜ່ງ ຄະນະບໍລິຫານ, ຄະນະກວດກາ, ຜູ້ອຳນວຍການ ແລະ ສິດລົງຄະແນນຕັດສິນ ບັນຫາສຳຄັນ ຂອງສະມາຄົມ.

ການພິຈາລະນາຮັບເອົາ ຫຼື ປົດສະມາຊິກສະໜັບສະໜູນອອກຈາກສະມາຄົມ ໃຫ້ປະຕິບັດຕາມທີ່ໄດ້ ກຳນົດໄວ້ໃນກົດລະບຽບຂອງສະມາຄົມ.

**ມາດຕາ 33 ສະມາຊິກກິດຕິມະສັກຂອງສະມາຄົມ**

ສະມາຊິກກິດຕິມະສັກຂອງສະມາຄົມ ແມ່ນ ພົນລະເມືອງລາວ ເປັນຜູ້ທີ່ມີບົດບາດ, ເປັນຜູ້ຊົງຄຸນວຸດທິ ທີ່ໄດ້ຮັບການເຊື່ອຖືໃນສັງຄົມ, ເຄີຍໄດ້ປະກອບສ່ວນໃຫ້ແກ່ສະມາຄົມ ແລະ ສະມາຄົມໄດ້ເຊີນໃຫ້ເປັນ ສະມາຊິກກິດຕິມະສັກ. ສຳລັບຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ຕ້ອງເປັນຜູ້ທີ່ເຄື່ອນໄຫວ ດຳເນີນທຸລະກິດ ຢູ່ ສປປ ລາວ ຢ່າງຖືກຕ້ອງຕາມກົດໝາຍ.

ສະມາຊິກກິດຕິມະສັກ ມີ ສິດ ແລະ ໜ້າທີ່ ຄືກັນກັບສະມາຊິກສາມັນ ຍົກເວັ້ນສິດ ເລືອກຕັ້ງ, ສະໝັກ ຮັບເລືອກຕັ້ງ ເຂົ້າໃນຕຳແໜ່ງ ຄະນະບໍລິຫານ, ຄະນະກວດກາ, ຜູ້ອຳນວຍການ ແລະ ສິດລົງຄະແນນຕັດສິນ ບັນຫາສຳຄັນ ຂອງສະມາຄົມ.

## ໝວດທີ 6
## ກອງປະຊຸມຂອງສະມາຄົມ

**ມາດຕາ 34 ປະເພດກອງປະຊຸມຂອງສະມາຄົມ**

ກອງປະຊຸມຂອງສະມາຄົມ ມີ ດັ່ງນີ້:

1. ກອງປະຊຸມໃຫຍ່;
2. ກອງປະຊຸມປະຈຳປີ;
3. ກອງປະຊຸມຄະນະບໍລິຫານ.

**ມາດຕາ 35 ກອງປະຊຸມໃຫຍ່ຂອງສະມາຄົມ**

ກອງປະຊຸມໃຫຍ່ຂອງສະມາຄົມ ແມ່ນ ກອງປະຊຸມສູງສຸດຂອງສະມາຄົມ, ເປີດຂຶ້ນຕາມຮູບແບບ ກອງປະຊຸມໃຫຍ່ທົ່ວສະມາຊິກ ຫຼື ກອງປະຊຸມໃຫຍ່ຕົວແທນສະມາຊິກ ຕາມທີ່ໄດ້ກຳນົດໃນກົດລະບຽບຂອງ ສະມາຄົມ.

ກອງປະຊຸມໃຫຍ່ ເປີດຂຶ້ນຕາມການກຳນົດຂອງກົດລະບຽບຂອງສະມາຄົມ, ແຕ່ບໍ່ໃຫ້ເກີນ ຫ້າ ປີ ນັບແຕ່ ກອງປະຊຸມໃຫຍ່ຄັ້ງກ່ອນສິ້ນສຸດລົງ.

ສະມາຄົມ ສາມາດເປີດກອງປະຊຸມວິສາມັນຂອງຕົນຂຶ້ນໄດ້ ເມື່ອເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ກ່ຽວກັບການເຄື່ອນໄຫວວຽກງານຂອງສະມາຄົມ ຫຼື ເມື່ອມີສະມາຊິກສາມັນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນ ສະມາຊິກສາມັນທັງໝົດ ຫຼື ມີຄະນະບໍລິຫານຂອງສະມາຄົມ ຈຳນວນ ສອງສ່ວນສາມ ຂຶ້ນໄປ ສະເໜີຂໍໃຫ້ເປີດ ກອງປະຊຸມວິສາມັນ.

ມະຕິຂອງກອງປະຊຸມໃຫຍ່ຂອງສະມາຄົມ ໃຫ້ຖືເອົາຕາມສຽງສ່ວນຫຼາຍ, ໃນກໍລະນີສຽງເທົ່າກັນ ໃຫ້ຖື ເອົາຄຳເຫັນຂອງປະທານເປັນອັນຊີ້ຂາດ, ແຕ່ຄຳເຫັນຂອງສຽງສ່ວນໜ້ອຍກໍ່ຕ້ອງໄດ້ບັນທຶກໄວ້ເປັນຂໍ້ມູນ.

ກ່ອນເປີດກອງປະຊຸມໃຫຍ່ຂອງສະມາຄົມ ຄະນະບໍລິຫານ ຕ້ອງສະເໜີເປັນລາຍລັກອັກສອນ ກ່ຽວກັບ ເນື້ອໃນ ແລະ ປະກອບຊີວະປະຫວັດຜູ້ທີ່ເປັນເປົ້າໝາຍສະໝັກເປັນຄະນະບໍລິຫານ ຂອງສະມາຄົມ ຫາ ຄະນະ ຈັດຕັ້ງສູນກາງພັກ ລ່ວງໜ້າ ຫົກສິບ ວັນ ກ່ອນວັນເປີດກອງປະຊຸມໃຫຍ່. ພາຍຫຼັງສິ້ນສຸດກອງປະຊຸມໃຫຍ່ຂອງ ຕົນແລ້ວ ໃຫ້ລາຍງານຜົນຂອງກອງປະຊຸມ ຕໍ່ຄະນະຈັດຕັ້ງສູນກາງພັກພາຍໃນກຳນົດ ສາມສິບ ວັນ.

**ມາດຕາ 36 ກອງປະຊຸມປະຈຳປີຂອງສະມາຄົມ**

ກອງປະຊຸມປະຈຳປີຂອງສະມາຄົມ ແມ່ນ ກອງປະຊຸມສະຫຼຸບຜົນການເຄື່ອນໄຫວວຽກງານຂອງສະມາຄົມ ໃນໄລຍະໜຶ່ງປີຜ່ານມາ, ຜ່ານທິດທາງແຜນການເຄື່ອນໄຫວ ໃນປີຕໍ່ໄປ, ຍ້ອງຍໍບຸກຄົນດີເດັ່ນໃນການເຄື່ອນໄຫວ ວຽກງານ ແລະ ບັນຫາອື່ນຂອງສະມາຄົມ.

**ມາດຕາ 37 ກອງປະຊຸມຄະນະບໍລິຫານຂອງສະມາຄົມ**

ກອງປະຊຸມຄະນະບໍລິຫານສະມາຄົມ ແມ່ນ ກອງປະຊຸມ ສະຫຼຸບ, ທົບທວນຄືນການ ຊີ້ນຳ-ນຳພາ ວຽກງານຂອງສະມາຄົມ ໃຫ້ບັນລຸຕາມແຜນການປະຈຳປີວາງໄວ້ ຊຶ່ງເປີດຂຶ້ນຢ່າງໜ້ອຍ ສາມ ເດືອນ ຕໍ່ຄັ້ງ ແລະ ເປີດຂຶ້ນຕາມກົດລະບຽບຂອງສະມາຄົມກຳນົດ.

## ໝວດທີ 7
## ການໂຮມ, ການແຍກ, ການຍົກລະດັບ, ການປ່ຽນຊື່ ແລະ ການຍຸບເລີກ ສະມາຄົມ

**ມາດຕາ 38 ການໂຮມສະມາຄົມ**

ສະມາຄົມ ທີ່ມີຈຸດປະສົງໂຮມເອົາຫຼາຍສະມາຄົມເປັນສະມາຄົມດຽວ ຕ້ອງໄດ້ຮັບການເຫັນດີຈາກ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໂດຍສະເໜີຫາ ຄະນະຈັດຕັ້ງສູນກາງພັກ ເພື່ອພິຈາລະນາການອະນຸຍາດ ແລະ ອອກໃບທະບຽນ.

**ມາດຕາ 39 ການແຍກສະມາຄົມ**

ສະມາຄົມ ທີ່ມີຈຸດປະສົງແຍກອອກເປັນ ສອງ ຫຼື ຫຼາຍສະມາຄົມ ຕ້ອງໄດ້ຮັບການເຫັນດີ ຈາກກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໂດຍສະເໜີຫາຄະນະຈັດຕັ້ງສູນກາງພັກ ເພື່ອພິຈາລະນາການອະນຸຍາດ ແລະ ອອກໃບທະບຽນ.

**ມາດຕາ 40 ການຍົກລະດັບຂອບເຂດການເຄື່ອນໄຫວຂອງສະມາຄົມ**

ສະມາຄົມ ທີ່ເຄື່ອນໄຫວໃນຂອບເຂດ ເມືອງ, ນະຄອນ ສາມາດຍົກລະດັບຂອບເຂດການເຄື່ອນໄຫວ ເປັນສະມາຄົມທີ່ເຄື່ອນໄຫວໃນຂອບເຂດ ນະຄອນຫຼວງ, ແຂວງ ຫຼື ເຄື່ອນໄຫວໃນຂອບເຂດທົ່ວປະເທດ. ສະມາຄົມ ທີ່ເຄື່ອນໄຫວໃນຂອບເຂດ ນະຄອນຫຼວງ, ແຂວງ ສາມາດຍົກລະດັບຂອບເຂດການເຄື່ອນໄຫວ ເປັນສະມາຄົມທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ.

ການຍົກລະດັບຂອບເຂດການເຄື່ອນໄຫວຂອງສະມາຄົມ ຕ້ອງໄດ້ຮັບການເຫັນດີ ຈາກກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໂດຍສະເໜີຫາຄະນະຈັດຕັ້ງສູນກາງພັກ ເພື່ອພິຈາລະນາການອະນຸຍາດ ແລະ ອອກໃບທະບຽນ.

**ມາດຕາ 41 ການປ່ຽນຊື່ສະມາຄົມ**

ສະມາຄົມ ສາມາດປ່ຽນຊື່ໄດ້ ຕ້ອງຜ່ານການເຫັນດີ ຕາມມະຕິກອງປະຊຸມສະມາຄົມ ແລະ ໄດ້ຮັບການອະນຸຍາດຈາກຄະນະຈັດຕັ້ງສູນກາງພັກ.

**ມາດຕາ 42 ການຍຸບເລີກສະມາຄົມ**

ສະມາຄົມ ຈະຖືກຍຸບເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມຄວາມສະໝັກໃຈ;
2. ໝົດກໍານົດເວລາການເຄື່ອນໄຫວ ຕາມທີ່ກໍານົດໄວ້ຢູ່ໃນກົດລະບຽບຂອງສະມາຄົມ;
3. ສະມາຄົມ ໄດ້ບັນລຸຈຸດປະສົງທີ່ໄດ້ກໍານົດໄວ້ຢູ່ໃນກົດລະບຽບຂອງຕົນແລ້ວ;
4. ບໍ່ມີທຶນ ຫຼື ຊັບສິນ ເພື່ອເຄື່ອນໄຫວຕໍ່ໄປ;
5. ບໍ່ມີການເຄື່ອນໄຫວເປັນປະຈໍາ ສິບສອງ ເດືອນ ຕິດຕໍ່ກັນ ແລະ ບໍ່ມີການລາຍງານ ກ່ຽວກັບ ສະພາບການຈັດຕັ້ງ, ການເຄື່ອນໄຫວ ແລະ ການເງິນຂອງຕົນ ໃຫ້ອົງການຈັດຕັ້ງລັດທີ່ກ່ຽວຂ້ອງຊາບ ເປັນເວລາຢ່າງໜ້ອຍ ສອງ ປີ ຕິດຕໍ່ກັນ;
6. ມີຄໍາຕັດສິນຂອງສານໃຫ້ຍຸບເລີກ;
7. ມີການລະເມີດ ກົດໝາຍ, ລະບຽບການ ຫຼື ກົດລະບຽບຂອງສະມາຄົມ ຢ່າງຮ້າຍແຮງ.

ພາຍຫຼັງຍຸບເລີກສະມາຄົມແລ້ວ ຄະນະຈັດຕັ້ງສູນກາງພັກ ຕ້ອງລຶບຊື່ສະມາຄົມອອກຈາກບັນຊີສະມາຄົມ ແລະ ແຈ້ງເປັນລາຍລັກອັກສອນໃຫ້ແກ່ ກະຊວງ, ອົງການ, ຄະນະກໍາມະການປົກຄອງ ນະຄອນຫຼວງ, ແຂວງ, ຄະນະກໍາມະການປົກຄອງ ເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງ ຊາບ.

ຊັບສິນຂອງສະມາຄົມ ພາຍຫຼັງຍຸບເລີກ ຕ້ອງມີການຊໍາລະສະສາງ ໜີ້ສິນ, ລາຍຈ່າຍ ໃຫ້ຄົບຖ້ວນຕາມກົດໝາຍ. ຖ້າຫາກຊັບສິນຍັງເຫຼືອ ໃຫ້ປະຕິບັດຕາມກົດລະບຽບຂອງສະມາຄົມ, ໂອນໃຫ້ສະມາຄົມອື່ນ ຫຼື ລັດ ຮັບເອົາ ເພື່ອຈັດສັນໃຫ້ ສະມາຄົມອື່ນ.

## ໝວດທີ 8
## ການເງິນ ແລະ ຊັບສິນ ຂອງສະມາຄົມ

**ມາດຕາ 43 ແຫຼ່ງລາຍຮັບຂອງສະມາຄົມ**

ແຫຼ່ງລາຍຮັບຂອງສະມາຄົມ ໄດ້ມາຈາກ:

1. ເງິນບຳລຸງຂອງສະມາຊິກ;
2. ເງິນບໍລິຈາກຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ການຊ່ວຍເຫຼືອຂອງບຸກຄົນ ຫຼື ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ;
4. ລາຍໄດ້ຈາກການສະໜອງການບໍລິການ ຫຼື ການເຄື່ອນໄຫວອື່ນ ທີ່ຖືກຕ້ອງຕາມກົດໝາຍ;
5. ແຫຼ່ງລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ສຳລັບການຮັບທຶນບໍລິຈາກ ຫຼື ການຊ່ວຍເຫຼືອ ຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ພາຍໃນ ແລະ ຕ່າງປະເທດ ຈະໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 44 ການຂຶ້ນທະບຽນຍານພາຫະນະຂອງສະມາຄົມ**

ຍານພາຫະນະ ທີ່ຢູ່ໃນການຄຸ້ມຄອງ ແລະ ນຳໃຊ້ຂອງສະມາຄົມ ທີ່ນຳເຂົ້າມາ ຫຼື ໄດ້ຮັບຈາກການ ຊື້-ຂາຍ ຢູ່ພາຍໃນຢ່າງຖືກຕ້ອງຕາມກົດໝາຍ ຕ້ອງຂຶ້ນທະບຽນຍານພາຫະນະນຳຂະແໜງການໂຍທາທິການ ແລະ ຂົນສົ່ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 45 ການຄຸ້ມຄອງ ແລະ ການນຳໃຊ້ແຫຼ່ງລາຍຮັບຂອງສະມາຄົມ**

ການຄຸ້ມຄອງ ແລະ ການນຳໃຊ້ແຫຼ່ງລາຍຮັບ ຂອງສະມາຄົມ ຕ້ອງປະຕິບັດຕາມ ກົດໝາຍ, ລະບຽບການ ແລະ ກົດລະບຽບຂອງສະມາຄົມ ແຕ່ລາຍຈ່າຍບໍລິຫານບໍ່ໃຫ້ເກີນ ສາມສິບສ່ວນຮ້ອຍຂອງລາຍຮັບທັງໝົດ.

ການປ່ຽນແປງ, ການມອບ ຫຼື ການໂອນ ຊັບສິນຂອງສະມາຄົມ ໃຫ້ປະຕິບັດຕາມ ກົດໝາຍ, ລະບຽບການ ແລະ ກົດລະບຽບຂອງສະມາຄົມ ບົນພື້ນຖານການເຫັນດີ ຈາກຄະນະຈັດຕັ້ງສູນກາງພັກ.

## ໝວດທີ 9
## ຂໍ້ຫ້າມ

**ມາດຕາ 46 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຂັດຂວາງການປະຕິບັດ ສິດ ແລະ ໜ້າທີ່ ຂອງສະມາຄົມ;
2. ແອບອ້າງຊື່ ຫຼື ນຳໃຊ້ຊື່ ຂອງສະມາຄົມ ໃນທາງທີ່ບໍ່ຖືກຕ້ອງ;
3. ສວຍໃຊ້ ຫຼື ແຊກແຊງການຈັດຕັ້ງພາຍໃນສະມາຄົມ;
4. ສ້າງຕັ້ງ ແລະ ເຄື່ອນໄຫວ ເປັນສະມາຄົມໂດຍບໍ່ໄດ້ຮັບອະນຸຍາດ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 47 ຂໍ້ຫ້າມສຳລັບສະມາຄົມ**

ຫ້າມ ສະມາຄົມ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດເສລີພາບໃນການສ້າງຕັ້ງສະມາຄົມ ຫຼື ໃນນາມສະມາຄົມ ເພື່ອເຄື່ອນໄຫວຂັດກັບກົດໝາຍ ແລະ ລະບຽບການ;

2. ເຄື່ອນໄຫວທີ່ຈະເປັນອັນຕະລາຍ ຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສິດເສລີພາບຂອງບຸກຄົນອື່ນ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ, ທ້ອງຖິ່ນ ແລະ ເຜົ່າຕ່າງໆ;

3. ເຄື່ອນໄຫວທີ່ນຳໄປສູ່ການແບ່ງແຍກຄວາມສາມັກຄີພາຍໃນຊາດ, ພາຍໃນທ້ອງຖິ່ນ ແລະ ເຜົ່າຕ່າງໆ;

4. ທຳລາຍຜົນປະໂຫຍດຂອງຊາດ, ຂອງລວມໝູ່ ແລະ ບຸກຄົນ;

5. ພົວພັນ ຫຼື ເຂົ້າຮ່ວມໃນການ ຟອກເງິນ ຫຼື ສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ;

6. ຮັບເອົາ ຊ່ຽວຊານ, ທີ່ປຶກສາ ແລະ ອາສາສະໝັກ ທີ່ເປັນຄົນຕ່າງປະເທດ ມາເຮັດວຽກຢູ່ສະມາຄົມ ໂດຍບໍ່ໄດ້ຮັບອະນຸຍາດ ຈາກພາກສ່ວນທີ່ກ່ຽວຂ້ອງ;

7. ປອມແປງ, ມອບໂອນ, ໃຫ້ເຊົ່າ, ໃບອະນຸຍາດສ້າງຕັ້ງ ຫຼື ໃບທະບຽນສະມາຄົມດ້ວຍຮູບການໃດກໍ່ຕາມ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 48 ຂໍ້ຫ້າມສຳລັບສະມາຊິກສະມາຄົມ**

ຫ້າມສະມາຊິກສະມາຄົມ ມີພຶດຕິກຳ ດັ່ງນີ້:

1. ແອບອ້າງສະມາຄົມໄປເຄື່ອນໄຫວໃນທາງທີ່ບໍ່ຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ກົດລະບຽບຂອງສະມາຄົມ;

2. ລະເມີດກົດລະບຽບຂອງສະມາຄົມ;

3. ຮັບເອົາ, ໃຫ້, ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ;

4. ສ້າງຄວາມແຕກແຍກຄວາມສາມັກຄີ, ກໍ່ຄວາມບໍ່ສະຫງົບ ພາຍໃນສະມາຄົມ;

5. ໂຄສະນາ, ໃສ່ຮ້າຍປ້າຍສີ ສະມາຄົມອື່ນ ໃນທາງບໍ່ດີ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 49 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ແລະ ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຕົນ;

2. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ເວົ້າຈາບໍ່ສຸພາບ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

3. ຮັບເອົາ, ໃຫ້, ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ;

4. ເມີນເສີຍ, ປະໝາດ, ເລີ່ນເລີ້ ຫຼື ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່;

5. ກົດໜ່ວງ, ຖ່ວງດຶງ ຫຼື ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງສະມາຄົມ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 10
## ການຄຸ້ມຄອງ ແລະ ການກວດກາສະມາຄົມ

**ມາດຕາ 50 ອົງການຄຸ້ມຄອງ ແລະ ກວດກາ ສະມາຄົມ**

ອົງການຄຸ້ມຄອງ ແລະ ກວດກາ ສະມາຄົມ ປະກອບດ້ວຍ:

1. ຄະນະຈັດຕັ້ງສູນກາງພັກ;
2. ຄະນະຈັດຕັ້ງນະຄອນຫຼວງ, ແຂວງ;
3. ຄະນະຈັດຕັ້ງເມືອງ, ນະຄອນ.

ຄະນະຈັດຕັ້ງສູນກາງພັກ ເປັນໃຈກາງປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາ ສະມາຄົມ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 51 ສິດ ແລະ ໜ້າທີ່ ຂອງຄະນະຈັດຕັ້ງສູນກາງພັກ**

ໃນການຄຸ້ມຄອງ ແລະ ກວດກາ ສະມາຄົມ ຄະນະຈັດຕັ້ງສູນກາງພັກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ, ປັບປຸງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບສະມາຄົມ ເພື່ອສະເໜີໃຫ້ລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບສະມາຄົມ ເປັນແຜນການ, ແຜນງານ, ໂຄງການ ລະອຽດຂອງຕົນ ແລະ ແນະນຳການຈັດຕັ້ງປະຕິບັດ;
3. ໂຄສະນາເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບສະມາຄົມ;
4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ, ຄູ່ມື, ແບບພິມ ກ່ຽວກັບວຽກງານສະມາຄົມ;
5. ອະນຸຍາດ ສ້າງຕັ້ງ, ໂຮມ, ແຍກ, ປ່ຽນຊື່, ຍົກລະດັບສະມາຄົມ;
6. ອອກ ແລະ ຕໍ່ ທະບຽນສະມາຄົມ;
7. ຍຸບເລີກ ສະມາຄົມ;
8. ພິຈາລະນາ ກ່ຽວກັບການຮັບທຶນຂອງສະມາຄົມ ຕາມລະບຽບການ;
9. ປະເມີນ, ຕິດຕາມ ແລະ ກວດກາຄວາມສ່ຽງສະມາຄົມຢ່າງເປັນປົກກະຕິ ພ້ອມທັງລາຍງານ ໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ກໍລະນີພົບເຫັນການເຄື່ອນໄຫວ ທີ່ພົວພັນກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
10. ແນະນຳ, ອຳນວຍຄວາມສະດວກ ເພື່ອໃຫ້ສະມາຄົມເຄື່ອນໄຫວຖືກຕ້ອງ ຕາມຈຸດປະສົງ ແລະ ພາລະບົດບາດ ຂອງສະມາຄົມ;
11. ສ້າງ, ບຳລຸງ, ຍົກລະດັບ ກ່ຽວກັບວຽກງານສະມາຄົມ ໃຫ້ແກ່ ພະນັກງານ-ລັດຖະກອນ ແລະ ບຸກຄະລາກອນຂອງສະມາຄົມ;
12. ສ້າງ, ນຳໃຊ້ ແລະ ພັດທະນາ ລະບົບຖານຂໍ້ມູນຄຸ້ມຄອງສະມາຄົມ ໃຫ້ມີຄວາມທັນສະໄໝ;
13. ນຳໃຊ້ມາດຕະການຕໍ່ສະມາຄົມ ທີ່ລະເມີດກົດໝາຍ ແລະ ລະບຽບການ;
14. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງ ສະມາຄົມ ລວມທັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານ ຂອງສະມາຄົມ;

15. ຕິກລົງ ຫຼື ສະເໜີ ລັດຖະບານ ພິຈາລະນາຍ້ອງຍໍ ສະມາຄົມທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາ ຫຼື ຊ່ວຍເຫຼືອສັງຄົມ;

16. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມ;

17. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານສະມາຄົມ ຕໍ່ລັດຖະບານຢ່າງເປັນປົກກະຕິ;

18. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 52 ສິດ ແລະ ໜ້າທີ່ ຂອງຄະນະຈັດຕັ້ງ ນະຄອນຫຼວງ, ແຂວງ

ໃນການຄຸ້ມຄອງ ແລະ ກວດກາ ສະມາຄົມ ຄະນະຈັດຕັ້ງ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສະມາຄົມ;

2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສະມາຄົມ;

3. ປະເມີນ, ຕິດຕາມ ແລະ ກວດກາຄວາມສ່ຽງສະມາຄົມຢ່າງເປັນປົກກະຕິ ພ້ອມທັງລາຍງານ ໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ກໍລະນີພົບເຫັນການເຄື່ອນໄຫວທີ່ພົວພັນກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

4. ແນະນຳ, ອຳນວຍຄວາມສະດວກ ເພື່ອໃຫ້ສະມາຄົມເຄື່ອນໄຫວຖືກຕ້ອງ ຕາມຈຸດປະສົງ ແລະ ພາລະບົດບາດ ຂອງສະມາຄົມ;

5. ສະເໜີ ສ້າງ, ບຳລຸງ, ຍົກລະດັບ ໃຫ້ແກ່ ພະນັກງານ-ລັດຖະກອນ ແລະ ບຸກຄະລາກອນ ກ່ຽວກັບວຽກງານສະມາຄົມ;

6. ຄຸ້ມຄອງ ແລະ ນຳໃຊ້ ລະບົບຖານຂໍ້ມູນຄຸ້ມຄອງສະມາຄົມ;

7. ນຳໃຊ້ມາດຕະການຕໍ່ສະມາຄົມ ທີ່ລະເມີດກົດໝາຍ ແລະ ລະບຽບການ;

8. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງສະມາຄົມ ລວມທັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຂອງສະມາຄົມ;

9. ປະສານສົມທົບກັບ ພະແນກ, ອົງການທຽບເທົ່າພະແນກ ນະຄອນຫຼວງ, ແຂວງ ແລະ ຄະນະກຳມະການປົກຄອງເມືອງ, ນະຄອນ ກ່ຽວກັບວຽກງານສະມາຄົມ;

10. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານສະມາຄົມ ຕໍ່ຄະນະຈັດຕັ້ງສູນກາງພັກ ແລະ ຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 53 ສິດ ແລະ ໜ້າທີ່ ຂອງຄະນະຈັດຕັ້ງ ເມືອງ, ນະຄອນ

ໃນການຄຸ້ມຄອງ ແລະ ກວດກາ ສະມາຄົມ ຄະນະຈັດຕັ້ງ ເມືອງ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສະມາຄົມ;

2. ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບສະມາຄົມ;

3. ຕິດຕາມ ແລະ ກວດກາຄວາມສ່ຽງສະມາຄົມຢ່າງເປັນປົກກະຕິ ພ້ອມທັງລາຍງານ ໃຫ້ສໍານັກງານຂໍ້ມູນຕ້ານການຟອກເງິນ ກໍລະນີພົບເຫັນການເຄື່ອນໄຫວທີ່ພົວພັນກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

4. ແນະນໍາ, ອໍານວຍຄວາມສະດວກ ເພື່ອໃຫ້ສະມາຄົມເຄື່ອນໄຫວຖືກຕ້ອງ ຕາມຈຸດປະສົງ ແລະ ພາລະບົດບາດ ຂອງສະມາຄົມ;

5. ນໍາໃຊ້ ລະບົບຖານຂໍ້ມູນຄຸ້ມຄອງສະມາຄົມ;

6. ນໍາໃຊ້ມາດຕະການຕໍ່ສະມາຄົມ ທີ່ລະເມີດກົດໝາຍ ແລະ ລະບຽບການ;

7. ຮັບ ແລະ ພິຈາລະນາແກ້ໄຂຄໍາສະເໜີຂອງສະມາຄົມ ລວມທັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຂອງສະມາຄົມ;

8. ປະສານສົມທົບກັບ ຫ້ອງການ, ອົງການທຽບເທົ່າຫ້ອງການເມືອງ, ນະຄອນ ແລະ ຄະນະກໍາມະການປົກຄອງຕາແສງ ກ່ຽວກັບວຽກງານສະມາຄົມ;

9. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານສະມາຄົມ ຕໍ່ຄະນະຈັດຕັ້ງ ນະຄອນຫຼວງ, ແຂວງ ແລະ ຄະນະກໍາມະການປົກຄອງເມືອງ, ນະຄອນ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 54 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາ ແລະ ຢັ້ງຢືນ ຄວາມຖືກຕ້ອງ ກ່ຽວກັບປະຫວັດ ຄະນະຂົນຂວາຍ ແລະ ເປົ້າໝາຍຄະນະບໍລິຫານຂອງສະມາຄົມ;

2. ພິຈາລະນາ ຄວັດ ແລະ ຕິດຕາມ ກວດກາ ກ່ຽວກັບການນໍາໃຊ້ ຕາປະທັບສະມາຄົມ;

3. ຕິດຕາມ ກວດກາ ການເຄື່ອນໄຫວຂອງສະມາຄົມ;

4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 55 ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ**

ກະຊວງການຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ ກ່ຽວກັບການຮັບທຶນ ຈາກຕ່າງປະເທດ ຂອງສະມາຄົມ ຕາມລະບຽບການ;

2. ອະນຸຍາດໃຫ້ ຊ່ຽວຊານ, ທີ່ປຶກສາ ແລະ ອາສາສະໝັກ ທີ່ເປັນຄົນຕ່າງປະເທດ ມາເຮັດວຽກໃນສະມາຄົມ ແລະ ຜູ້ໃຫ້ທຶນ ມາຕິດຕາມໂຄງການ ຂອງສະມາຄົມ;

3. ປະສານກັບກະຊວງ, ອົງການ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຕິດຕາມ ແຜນງານ, ໂຄງການຂອງສະມາຄົມ ທີ່ກະຊວງການຕ່າງປະເທດ ອະນຸຍາດຮັບທຶນ;

4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 56 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມື ກັບຄະນະຈັດຕັ້ງສູນກາງພັກໃນການຄຸ້ມຄອງ ແລະ ກວດກາ ວຽກງານ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 57 ເນື້ອໃນການກວດກາ**

ການກວດກາວຽກງານສະມາຄົມ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ, ລະບຽບການ ແລະ ກົດລະບຽບຂອງສະມາຄົມ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງສະມາຄົມ;
3. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

**ມາດຕາ 58 ຮູບການການກວດກາ**

ການກວດກາວຽກງານສະມາຄົມ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນຕາມແຜນການຢ່າງເປັນປະຈຳ ແລະ ມີການກຳນົດເວລາແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຈະຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາສະມາຄົມ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 59 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 60 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

ສຳລັບມາດຕະການປັບໃໝ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 12
## ບົດບັນຍັດສຸດທ້າຍ

**ມາດຕາ 61 ການຈັດຕັ້ງປະຕິບັດ**

ຄະນະຈັດຕັ້ງສູນກາງພັກ ເປັນເຈົ້າການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 62 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 10 ຕຸລາ 2025 ເປັນຕົ້ນໄປ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017.

ຕາງໜ້າລັດຖະບານແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**